ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0629/ອຄ.ກຂອ.

ນະຄອນຫຼວງວຽງຈັນ, ວັນທີ 30 ມີນາ 2015

**ຂໍ້ຕົກລົງ**

**ວ່າດ້ວຍ ການມອບສິດໃຫ້ເຂດເສດຖະກິດພິເສດ ສະຫວັນ-ເຊໂນ**

**ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ປະເພດທີ່ໄດ້ຮັບສິດທິພິເສດດ້ານການຄ້າ**

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 552/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມ ດຳລັດວ່າດ້ວຍແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2012;
- ອີງຕາມ ການສະເໜີ ຂອງກົມການນຳເຂົ້າ ແລະ ສົ່ງອອກ.

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ ດັ່ງນີ້:**

ມາດຕາ 1: ມອບສິດໃຫ້ ເຂດເສດຖະກິດພິເສດ ສະຫວັນ-ເຊໂນ ເປັນຜູ້ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າປະເພດທີ່ໄດ້ຮັບສິດພິເສດດ້ານການຄ້າ ສຳລັບສິນຄ້າທີ່ຜະລິດຈາກໂຮງງານທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງເຂດເສດຖະກິດພິເສດ ສະຫວັນ-ເຊໂນ, ເພື່ອເປັນການຊຸກຍູ້ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ຫົວໜ່ວຍທຸລະກິດທີ່ເຂົ້າມາລົງທຶນຢູ່ເຂດດັ່ງກ່າວ.

ມາດຕາ 2: ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແມ່ນໃຫ້ອອກແຕ່ສະເພາະສິນຄ້າທີ່ຜະລິດໄດ້ຕາມເງື່ອນໄຂຂອງລະບຽບແຫຼ່ງກຳເນີດສິນຄ້າທີ່ກ່ຽວຂ້ອງກຳນົດໄວ້ເທົ່ານັ້ນ. ເຂດເສດຖະກິດພິເສດ ສະຫວັນ-ເຊໂນ ຕ້ອງຮັບຜິດຊອບຕໍ່ທຸກການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງຕົນ.

ມາດຕາ 3: ມອບໃຫ້ ເຂດເສດຖະກິດພິເສດ ສະຫວັນ-ເຊໂນ ແຕ່ງຕັ້ງພະນັກງານຜູ້ທີ່ມີເງື່ອນໄຂໃນການເຊັນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລ້ວແຈ້ງໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ພ້ອມດ້ວຍແບບຢ່າງລາຍເຊັນ ເພື່ອແຈ້ງຕໍ່ໃຫ້ປະເທດທີ່ກ່ຽວຂ້ອງຕາມລະບຽບການທີ່ກຳນົດໄວ້.

ມາດຕາ 4: ເຂດເສດຖະກິດພິເສດ ສະຫວັນ-ເຊໂນ ຕ້ອງປະຕິບັດຕາມຄຳແນະນຳ ກ່ຽວກັບ ການຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ສະບັບເລກທີ 2225/ອຄ.ກຂອ, ລົງວັນທີ 05 ທັນວາ 2014, ລະບຽບການຕ່າງໆ ຂອງ ສປປ ລາວ ແລະ ບັນດາປະເທດທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

ມາດຕາ 5: ເຂດເສດຖະກິດພິເສດ ສະຫວັນ-ເຊໂນ ຕ້ອງປະຕິບັດຫຼັກການສະເໝີພາບ, ໂປ່ງໃສ, ເປັນທຳຕໍ່ທຸກຫົວໜ່ວຍທຸລະກິດສົ່ງອອກ ພາຍໃນເຂດຂອງຕົນ; ປະຕິບັດໜ້າທີ່ໃນການເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 003/ປປທ, ລົງວັນທີ 26/12/2012 ເພື່ອມອບເຂົ້າງົບປະມານ; ສະຫຼຸບລາຍງານການຈັດຕັ້ງ

ປະຕິບັດ ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຊາບເປັນແຕ່ລະເດືອນ, ງວດ ແລະ ປີ.

ມາດຕາ 6: ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ຊີ້ນຳຢ່າງໃກ້ຊິດ ເພື່ອໃຫ້ເຂດເສດຖະກິດພິເສດ ສະຫວັນ-ເຊໂນ ສາມາດຈັດຕັ້ງປະຕິບັດໄດ້ຢ່າງຖືກຕ້ອງຕາມລະບຽບການ.

ມາດຕາ 7: ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ເປັນເອກະພາບ ແລະ ມີປະສິດທິຜົນສູງສຸດ.

ມາດຕາ 8: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 01 ກໍລະກົດ 2015 ເປັນຕົ້ນໄປ.

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ

ນ. ເຂັມມະນີ ພົນເສນາ

ບ່ອນສົ່ງ:
- ທ່ານ ລັດຖະມົນຕີຊ່ວຍວ່າການ ເພື່ອຊາບ
- ກົມພາສີ ກະຊວງການເງິນ ເພື່ອຊາບ
- ບັນດາກົມອ້ອມຂ້າງກະຊວງ ເພື່ອຊາບ
- ຫ້ອງວ່າການປົກຄອງແຂວງສະຫວັນນະເຂດ ເພື່ອຊາບ
- ພະແນກ ອຄ ແຂວງສະຫວັນນະເຂດ ເພື່ອຊາບ
- ເຂດເສດຖະກິດພິເສດ ສະຫວັນ-ເຊໂນ ເພື່ອຈັດຕັ້ງປະຕິບັດ.